Employment Development Department
State of California

# ປະກັນໄພການຫວ່າງງານ

ຍື່ນຂໍ້ຮຽກຮ້ອງ • ຂໍ້ມູນການຊຳລະ • ຂໍ້ມູນທົ່ວໄປ

## ໃຜຄວນຍື່ນຂໍ້ຮຽກຮ້ອງ

ທ່ານອາດຈະຍື່ນຂໍ້ຮຽກຮ້ອງຂໍເງິນຊ່ວຍເຫຼືອປະກັນໄພການຫວ່າງງານ (UI) ໄດ້ ຖ້າທ່ານບໍ່ໄດ້ເຮັດວຽກອີກ ຫຼືຊົ່ວໂມງເຮັດວຽກຂອງທ່ານຫຼຸດລົງ. ເພື່ອໃຫ້ມີສິດໄດ້ຮັບເງິນຊ່ວຍເຫຼືອ UI ທ່ານຕ້ອງອອກວຽກໂດຍທີ່ບໍ່ແມ່ນຄວາມຜິດຂອງທ່ານເອງ ແລະຍັງມີຄວາມສາມາດທາງຮ່າງກາຍທີ່ຈະເຮັດວຽກໄດ້, ພ້ອມທີ່ຈະຮັບວຽກໄດ້, ແລະກຳລັງຊອກວຽກເຮັດຢູ່.

**ຈະຍື່ນເມື່ອໃດ**

ທ່ານຄວນສະໝັກຂໍເງິນຊ່ວຍເຫຼືອທັນທີທີ່ທ່ານຫວ່າງງານ ຫຼືຊົ່ວໂມງເຮັດວຽກຂອງທ່ານຫຼຸດລົງ. ຂໍ້ຮຽກຮ້ອງຂອງທ່ານຈະຖືກຍື່ນໄປ ຫຼືເປີດຄືນໃໝ່ໃນວັນອາທິດຂອງອາທິດທີ່ທ່ານຍື່ນ. ທຸກຂໍ້ຮຽກຮ້ອງມີໄລຍະລໍຖ້າບໍ່ໄດ້ຈ່າຍໜຶ່ງອາທິດ. ໄລຍະລໍຖ້າບໍ່ເລີ່ມຕົ້ນຂຶ້ນຈົນກ່ວາໄດ້ຍື່ນຂໍ້ຮຽກຮ້ອງແລ້ວ.

**ສິ່ງທີ່ທ່ານຈຳເປັນຕ້ອງຍື່ນ**

ເພື່ອກຳນົດວ່າ ທ່ານມີສິດໄດ້ຮັບເງິນຊ່ວຍເຫຼືອບໍ່ນັ້ນ, ທ່ານຈະຖືກຖາມຄຳຖາມຫຼາຍຂໍ້ເຊັ່ນ ຂໍ້ມູນກ່ຽວກັບນາຍຈ້າງຜ່ານມາຂອງທ່ານ ແລະເຫດຜົນທີ່ທ່ານອອກຈາກວຽກ. ເພື່ອຮັບປະກັນໃຫ້ຂໍ້ຮຽກຮ້ອງຂອງທ່ານໄດ້ຮັບການຍື່ນທັນທີທີ່ເປັນໄປໄດ້, ທ່ານຄວນຈະມີຂໍ້ມູນຕໍ່ໄປນີ້ໄວ້ໃຫ້ພ້ອມ ກ່ອນທີ່ທ່ານຈະຍື່ນຂໍ້ຮຽກຮ້ອງຄື:

- ໝາຍເລກປະກັນສັງຄົມຂອງທ່ານ, ຊື່ (ລວມທັງທຸກຊື່ທີ່ທ່ານໃຊ້ໃນຂະນະເຮັດວຽກ), ວັນເດືອນປີເກີດ, ທີ່ຢູ່ບ່ອນຢູ່ອາໄສ ແລະບ່ອນສົ່ງໜັງສືທາງໄປສະນີ (ລວມທັງລະຫັດ ZIP) ແລະເບີໂທລະສັບ (ລວມທັງລະຫັດເຂດ).
- ເລກໃບຂັບຂີ່ ຫຼືເລກບັດປະຈຳຕົວຂອງທ່ານ.
- ວັນທີສຸດທ້າຍທີ່ທ່ານເຮັດວຽກໃຫ້ກັບນາຍຈ້າງໃດໜຶ່ງ.
- ຂໍ້ມູນນາຍຈ້າງຄົນຫຼ້າສຸດ ລວມທັງຊື່ຂອງທຸລະກິດ ຫຼືບໍລິສັດທີ່ທ່ານເຮັດວຽກໃຫ້ຕົວຈິງ, ທີ່ຢູ່ (ທີ່ຕັ້ງທາງໄປສະນີ ແລະຕົວຈິງ) ແລະເບີໂທລະສັບ. ພວກເຮົາຍັງຕ້ອງການລະຫັດ ZIP ສຳລັບທີ່ຢູ່ທັງສອງ ແລະລະຫັດເຂດສຳລັບເບີໂທລະສັບຂອງນາຍຈ້າງນຳ.
- ເຫດຜົນທີ່ທ່ານບໍ່ເຮັດວຽກໃຫ້ກັບນາຍຈ້າງຄົນຫຼ້າສຸດອີກ ແລະຊື່ຂອງຫົວໜ້າຊີ້ນຳຂອງທ່ານ.
- ຂໍ້ມູນກ່ຽວກັບນາຍຈ້າງທຸກຄົນທີ່ທ່ານໄດ້ເຮັດວຽກໃຫ້ໃນລະຫວ່າງ 18 ເດືອນກ່ອນຍື່ນຂໍ້ຮຽກຮ້ອງຂອງທ່ານ, ລວມທັງຊື່, ທີ່ຢູ່, ໄລຍະເວລາຂອງການເຮັດວຽກ, ຄ່າຈ້າງທີ່ໄດ້ຮັບ, ແລະທ່ານໄດ້ຮັບການຈ່າຍຄ່າຈ້າງແນວໃດ.
- ຂໍ້ມູນຈາກສຳເນົາສະມາຊິກ 4 ຂອງ DD214 ຂອງທ່ານ, ຖ້າທ່ານຮັບໃຊ້ຢູ່ໃນກອງທັບໃນ 18 ເດືອນຜ່ານມາ.
- ຂໍ້ມູນຈາກແບບຟອມມາດຕະຖານ 8 ຂອງທ່ານ, “ແຈ້ງການເຖິງລູກຈ້າງຂອງລັດຖະບານກາງກ່ຽວກັບປະກັນໄພການຫວ່າງງານ” ຖ້າທ່ານເຮັດວຽກໃຫ້ກັບອົງການຂອງລັດຖະບານກາງໃນລະຫວ່າງ 18 ເດືອນຜ່ານມາ.
- ໝາຍເລກທະບຽນຄົນຕ່າງດ້າວຂອງທ່ານ ແລະວັນໝົດອາຍຸ ຖ້າທ່ານບໍ່ແມ່ນພົນລະເມືອງຂອງສະຫະລັດ.

## ວິທີຍື່ນ ຫຼືເປີດຂໍ້ຮຽກຮ້ອງຂອງທ່ານຄືນໃໝ່

**ທາງອອນລາຍນ໌**

ໃຊ້ eApply4UI ເພື່ອຍື່ນຂໍ UI ຫຼືເປີດຂໍ້ຮຽກຮ້ອງຂອງທ່ານຄືນໃໝ່. ມີການອອນລາຍນ໌ໃຫ້ຕະຫຼອດ 24 ຊົ່ວໂມງຕໍ່ມື້, 7 ມື້ຕໍ່ອາທິດ ແລະມີໃຫ້ເປັນພາສາອັງກິດ ແລະພາສາສະເປນ. ມັນມີຄວາມຮັບປະກັນ, ເຊື່ອຖືໄດ້, ແລະເປັນວິທີໄວທີ່ສຸດທີ່ຈະສະໝັກຂໍ UI ຫຼືເປີດຂໍ້ຮຽກຮ້ອງຂອງທ່ານຄືນໃໝ່.

eApply4UI www.edd.ca.gov/eapply4ui

www.edd.ca.gov/eapply4ui

**ທາງໂທລະສັບ**

ໂທໄປລົມກັບຜູ້ຕາງໜ້າຝ່າຍບໍລິການລູກຄ້າຂອງ Employment Development Department (EDD) (ກົມພັດທະນາການຈ້າງງານ) ເພື່ອຍື່ນ ຫຼືເປີດຂໍ້ຮຽກຮ້ອງຂອງທ່ານ. ທ່ານອາດຈະໂທຫາເບີໂທເກັບເງິນປາຍທາງເບີໃດໜຶ່ງຢູ່ບ່ອນໃດໜຶ່ງໃນສະຫະລັດ, ລະຫວ່າງເວລາ 8 ໂມງເຊົ້າຫາ 12 ໂມງທ່ຽງ (ຕາມເວລາມາດຕະຖານປາຊີຟິກ), ວັນຈັນຫາວັນສຸກ ຍົກເວັ້ນວັນພັກທາງການ:

| | |
|---|---|
| **ພາສາອັງກິດ 1-800-300-5616** | **ພາສາແມນດາຣິນ 1-866-303-0706** |
| **ພາສາສະເປນ 1-800-326-8937** | **ພາສາຫວຽດນາມ 1-800-547-2058** |
| **ພາສາແຄນໂຕນີສ 1-800-547-3506** | **TTY (ບໍ່ມີສຽງ) 1-800-815-9387** |

# ສິ່ງທີ່ຈະເກີດຂຶ້ນຕໍ່ໄປ

ຫຼັງຈາກທ່ານຍື່ນຂໍ້ຮຽກຮ້ອງແລ້ວ, ກະລຸນາໃຫ້ເວລາດຳເນີນການ 10 ວັນ. ຖ້າທ່ານບໍ່ໄດ້ຮັບການແຈ້ງບອກທາງໄປສະນີຫຼັງຈາກ 10 ວັນ, ໃຫ້ໂທຫາ ຫຼືຕິດຕໍ່ພວກເຮົາໂດຍການສົ່ງການສືບຖາມໄປທາງອອນລາຍນ໌ທີ່ www.edd.ca.gov/Unemployment ແລະສົ່ງຄຳຖາມຂອງທ່ານໄປທາງອີເມວ ໂດຍການເລືອກ "ຕິດຕໍ່ພວກເຮົາ" ພາຍໃຕ້ຂໍ້ມູນທົ່ວໄປ.

# ຂໍ້ມູນການຊຳລະ

ສຳລັບສະຖານະຂອງການຊຳລະຄ່າ UI ທີ່ໄດ້ຈ່າຍຫຼ້າສຸດ, ໃຫ້ໂທຫາເບີໂທເກັບເງິນປາຍທາງຂອງ EDD ທີ່ໃຫ້ການບໍລິການຮັບສາຍອັດຕະໂນມັດຕາມທີ່ໄດ້ເຮັດລາຍການໄວ້ຢູ່ລຸ່ມນີ້. ທ່ານຈຳເປັນຕ້ອງມີໝາຍເລກປະກັນສັງຄົມຂອງທ່ານ ແລະໝາຍເລກລະບຸຕົວ (PIN) 4 ຕົວເລກ ເພື່ອເຂົ້າໃຊ້ຂໍ້ມູນການຊຳລະ. ໝາຍເລກບໍລິການຕົວເອງອັດຕະໂນມັດໃຫ້ຄຳແນະນຳໄປແຕ່ລະຂັ້ນຕອນ ເພື່ອຊ່ວຍໃຫ້ທ່ານຕັ້ງ PIN ຂອງທ່ານ ເພື່ອໃຫ້ທ່ານສາມາດເຂົ້າໃຊ້ຂໍ້ມູນການຮຽກຮ້ອງ UI ຂອງທ່ານແບບປິດລັບໄດ້. ການບໍລິການຕົວເອງອັດຕະໂນມັດຍັງຈະແນະນຳທ່ານໄປຫາການບໍລິການອື່ນທີ່ທ່ານອາດຈະຕ້ອງການນຳອີກ.

**ການບໍລິການຕົວເອງອັດຕະໂນມັດ (ພາສາອັງກິດ ແລະພາສາສະເປນ) 1-866-333-4606**

# ຂໍ້ມູນທົ່ວໄປ

**ຖາມຄຳຖາມທີ່ມັກຖາມເລື້ອຍໆ**

**UI ຈ່າຍໃຫ້ຫຼາຍປານໃດ?**
ຂອບເຂດຈຳນວນເງິນຊ່ວຍເຫຼືອປະຈຳອາທິດຈາກຕ່ຳສຸດ $40 ຫາສູງສຸດ $450 ຂຶ້ນຢູ່ກັບລາຍໄດ້ປະຈຳງວດຜ່ານມາຂອງທ່ານ.

**ການໂທຫາຜູ້ຕາງໜ້າຝ່າຍບໍລິການລູກຄ້າແມ່ນໂທເວລາໃດດີທີ່ສຸດ?**
ເພື່ອໃຫ້ເວລາການລໍຖ້າຂອງທ່ານໜ້ອຍລົງ, ຫຼີກເວັ້ນການໂທໃນເວລາທີ່ມີຄົນໂທຫຼາຍທີ່ສຸດຄື: ວັນຈັນ, ມື້ຫຼັງຈາກວັນພັກທາງການ, ແລະລະຫວ່າງ 8 ໂມງເຊົ້າຫາ 8:30 ໂມງເຊົ້າ. ວັນທີ່ສາຍຂອງພວກເຮົາບໍ່ມີຄົນໂທຫຼາຍແມ່ນວັນພຸດ ແລະວັນພະຫັດ.

**ເປັນຫຍັງຂ້ອຍຈຶ່ງໄດ້ນັດໝາຍເວລາເພື່ອເຮັດການສຳພາດທາງໂທລະສັບ?**
ຖ້າມີຄຳຖາມໃດໜຶ່ງກ່ຽວກັບການມີສິດຂອງທ່ານທີ່ຈະໄດ້ຮັບເງິນຊ່ວຍເຫຼືອ, ຈຳເປັນຕ້ອງໄດ້ມີຂໍ້ມູນເພີ່ມເຕີມຈາກທ່ານ ແລະທ່ານຈະໄດ້ຮັບການແຈ້ງບອກທາງໄປສະນີເລື່ອງການສຳພາດທາງໂທລະສັບທີ່ນັດໝາຍເວລາໄວ້. ຕົວຢ່າງ, ທ່ານຈະໄດ້ຮັບການນັດໝາຍສຳພາດທາງໂທລະສັບ ຖ້າທ່ານລາອອກວຽກສຸດທ້າຍຂອງທ່ານ, ຖ້າທ່ານຖືກໄລ່ອອກຈາກວຽກສຸດທ້າຍຂອງທ່ານ, ຖ້າທ່ານບໍ່ສາມາດ ຫຼືບໍ່ພ້ອມເຮັດວຽກ, ຖ້າທ່ານບໍ່ຊອກວຽກເຮັດ. ເປັນເລື່ອງສຳຄັນທີ່ຈະຕ້ອງທວນຄືນເບິ່ງຂໍ້ມູນຢູ່ໃນການແຈ້ງບອກ ເພື່ອຊ່ວຍທ່ານກະກຽມການສຳພາດຂອງທ່ານ.

# ທຶນຮອນດ້ານອື່ນໆ

ທາງ EDD ໃຫ້ການບໍລິການຈ້າງງານ ແລະການຝຶກອົບຮົມໃນຂອບເຂດກ້ວາງຂວາງ ໃນການເປັນຄູ່ຮ່ວມງານກັບອົງການຂອງລັດ ແລະຂອງທ້ອງຖິ່ນ ແລະອົງການຈັດຕັ້ງຕ່າງໆ. ການບໍລິການເຫຼົ່ານີ້ມີໃຫ້ຢູ່ທົ່ວລັດຜ່ານ America's Job Center of California℠ (ສູນອາຊີບຂອງອາເມຣິກາຂອງລັດຄາລີຟໍເນຍ) (ເມື່ອກ່ອນຮູ້ຈັກກັນໃນນາມສູນອາຊີບປະຕູດຽວ) ທີ່ໃຫ້ຜົນປະໂຫຍດຊ່ວຍເຫຼືອຜູ້ຊອກວຽກເຮັດ, ຄົນງານທີ່ຖືກປົດອອກ, ຊາວໜຸ່ມ, ນັກຮົບເກົ່າ, ແລະຄົນພິການ. ໄດ້ມີການຈັດທຶນຮອນທີ່ບໍ່ມີຄ່າໃຊ້ຈ່າຍທັງໝົດເຫຼົ່ານີ້ໃຫ້ກໍ່ເພື່ອຮັບປະກັນໃຫ້ການຊອກວຽກເຮັດເປັນໜ້າວຽກໜຶ່ງທີ່ສຳເລັດຜົນ.

America's Job Center of California℠ (ສູນອາຊີບຂອງອາເມຣິກາຂອງລັດຄາລີຟໍເນຍ) ໃຫ້:

- ການຊ່ວຍເຫຼືອການຊອກວຽກເຮັດ
- ບັນຊີລາຍຊື່ວຽກຜ່ານທາງ CalJOBS℠
- ການເຂົ້າໃຊ້ໂທລະສັບ, ອິນເຕີເນັດ, ເຄື່ອງພິມ, ເຄື່ອງແຟັກ, ແລະຈັກກ້ອບປີ້
- ການສຳມະນາ
- ຂໍ້ມູນກ່ຽວກັບຄ່າຈ້າງ ແລະແນວໂນ້ມ
- ທຶນຮອນຊຸມຊົນ
- ແນະນຳຕໍ່ຫາການບໍລິການອື່ນ ແລະອັນອື່ນໆອີກ

ເພື່ອຊອກຫາ America's Job Center of California℠ ໃນທ້ອງຖິ່ນທີ່ຢູ່ໃກ້ທີ່ສຸດ, ໃຫ້ໂທຫາສາຍດ່ວນເບີໂທເກັບເງິນປາຍທາງຂອງ America's Workforce Network (ເຄືອຂ່າຍກຳລັງແຮງງານຂອງອາເມຣິກາ) ທີ່ເບີ 1-877-US 2 JOBS (1-877-872-5627) ຫຼືເຂົ້າຫາ www.servicelocator.org ເພື່ອເອົາຂໍ້ມູນກ່ຽວກັບການບໍລິການທີ່ມີຢູ່ໃນຊຸມຊົນທ້ອງຖິ່ນຂອງທ່ານ. ມີຂໍ້ມູນເປັນພາສາຕ່າງໆໃຫ້ຫຼາຍກວ່າ 140 ພາສາ ແລະມີການເຂົ້າໃຊ້ TTY ໃຫ້ທີ່ເບີ 1-877-889-5627 ສຳລັບຜູ້ພິການທາງຫູ.